ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການແຂວງສາລະວັນ

ເລກທີ .36...../ຫວຂ.ສວ
ສາລະວັນ, ວັນທີ ..26...11...2019

# ບົດລາຍງານ

ຮຽນ: ທ່ານ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ທີ່ເຄົາລົບຢ່າງສູງ.

ເລື່ອງ: ລາຍງານ ແລະ ຊີ້ແຈງ ກ່ຽວກັບ ປະຊາຊົນແຂວງສາລະວັນ ສະທ້ອນເຖິງລັດຖະບານ ໂດຍຜ່ານສາຍດ່ວນຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ.

- ອີງຕາມ ການລາຍງານຂອງພະແນກການກ່ຽວຂ້ອງ.

ຫ້ອງວ່າການແຂວງສາລະວັນ ຂໍຖືເປັນກຽດຮຽນລາຍງານ ມາຍັງທ່ານຊາບ ແລະ ຊີ້ແຈງ ກ່ຽວກັບ ປະຊາຊົນແຂວງສາລະວັນ ສະທ້ອນເຖິງລັດຖະບານ ໂດຍຜ່ານສາຍດ່ວນລັດຖະບານ ເຊິ່ງລວມທັງໝົດ 7 ຂໍ້ ລະອຽດດັ່ງນີ້:

1. ປະຊາຊົນບ້ານອົ້ນນ້ອຍ ເມືອງເລົ່າງາມ ແຂວງສາລະວັນ ໄດ້ສະທ້ອນເຖິງລັດຖະບານໃຫ້ແກ້ໄຂການຈັດຕັ້ງປະຕິບັດນະໂຍບາຍ ຜູ້ມີຜົນງານຄວາມດີ ຕໍ່ປະເທດຊາດ ຂອງທ່ານ ບຸນບັນ ບຸນປະເສີດ ເຊິ່ງເຫັນວ່າ ໄດ້ສະເໜີຂໍນະໂຍບາຍແຕ່ປີ 2010 ມາຮອດປັດຈຸບັນຍັງບໍ່ທັນໄດ້ຮັບການແກ້ໄຂ.

ວິທີແກ້ໄຂ: ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ໄດ້ປະສານສົມທົບກັບອົງການປົກຄອງເມືອງ ເລົ່າງາມ ລົງເກັບກຳຂໍ້ມູນ ເຊິ່ງເຫັນວ່າ ຕໍ່ບັນຫານີ້ ທ່ານ ບຸນບັນ ບຸນປະເສີດ ຍັງບໍ່ທັນໄດ້ຮັບນະໂຍບາຍ ຍ້ອນວ່າ ຜູ້ກ່ຽວຍັງບໍ່ມີລາຍຊື່ໃນຖານຂໍ້ມູນຂັ້ນເມືອງ ແລະ ຂັ້ນແຂວງຜູ້ກ່ຽວ ເຄີຍປະກອບເອກະສານແຕ່ບໍ່ໄດ້ຍື່ນຫາຫ້ອງການແຮງງານ ແລະ ສະຫວັດດີການເມືອງເລົ່າງາມ ຈົນມາຮອດປີ 2019 ຜູ້ກ່ຽວຈຶ່ງໄດ້ນຳເອົາໜັງສືສະເໜີມາຍື່ນຕໍ່ຫ້ອງການແຮງງານ ແລະ ສະຫວັດດີການເມືອງ ເລົ່າງາມ, ຫ້ອງການແຮງງານ ແລະ ສະຫວັດດີການເມືອງ ຈະໄດ້ນຳເອົາລາຍຊື່ຜູ້ກ່ຽວ ເຂົ້າຄົ້ນຄ້ວາຮັບຮອງໃນຂັ້ນຕໍ່ໄປ ປັດຈຸບັນ ພະແນກການກ່ຽວຂ້ອງ ກຳລັງຄົ້ນຄ້ວາ ເພື່ອສະເໜີກະຊວງພິຈາລະນາຕໍ່ໄປ.

2. ພໍ່ຕູ້ແບງ ບ້ານນາດູ ເມືອງສາລະວັນ ແຂວງສາລະວັນ ທີ່ສະທ້ອນເຖິງລັດຖະບານວ່າ ນາຍບ້ານນາດູ ໄດ້ລັກຂາຍດິນຂອງຕົນ ຈຳນວນ 4 ເຮັກຕາ, ແລ້ວໃຫ້ພະນັກງານທີ່ດິນເມືອງສາລະວັນ ລົງຂົ່ມຂູ່.

ວິທີແກ້ໄຂ: ອົງການປົກຄອງເມືອງສາລະວັນ ໄດ້ລົງເກັບກຳຂໍ້ມູນ ເຊິ່ງເຫັນວ່າ ຜ່ານການຄົ້ນຄ້ວາຂອງເຈົ້າໜ້າທີ່ກ່ຽວຂ້ອງ ພໍ່ຕູ້ແບງ ໄດ້ມີຂໍ້ຂັດແຍ່ງເລື່ອງທີ່ດິນ ກັບ 4 ຄອບຄົວ ໃນບ້ານນາດູ ໄດ້ມີໄກ່ເກ່ຍຫຼາຍຄັ້ງ ແຕ່ຜູ້ກ່ຽວບໍ່ຍອມ, ຕໍ່ມາ ພໍ່ຕູ້ແບງຈຶ່ງຮ້ອງຟ້ອງສານປະຊາຊົນເຂດ 1 ແລະ ສານໄດ້ຕັດສິນ ບອກວ່າ ຄຳຮ້ອງທີ່ສະເໜີຕໍ່ສານ ບໍ່ມີເຫດຜົນ ແລະ ໄດ້ຕັດສິນໃຫ້ 4 ຄອບຄົວມີສິດນຳໃຊ້ທີ່ດິນດັ່ງກ່າວ, ຕໍ່ຄຳຕັດສິນນີ້ ພໍ່ຕູ້ແບງບໍ່ພໍໃຈ ຈຶ່ງໄດ້ຂຽນຄຳຮ້ອງຂໍອຸທອນໄປຫາສານຂັ້ນອຸທອນແຂວງສາລະວັນ, ສານຂັ້ນອຸທອນຈຶ່ງໄດ້ພິພາກສາ ແລະ ຢັ້ງຢືນເອົາຕາຕັດສິນຂອງສານເຂດ 1, ຈາກນັ້ນ, ພໍ່ເຖົ້າແບງ ຈຶ່ງໄດ້ສະເໜີຂໍລົບລ້າງໄປຫາສານປະຊາຊົນພາກໃຕ້ (ແຂວງຈຳປາສັກ) ແລະ ສານພາກໃຕ້ຈຶ່ງໄດ້ຢັ້ງຢືນ ເອົາຕາມຄຳພິພາກສາຂອງສານປະຊາຊົນຂັ້ນອຸທອນແຂວງສາລະວັນທັງໝົດ, ຜູ້ກ່ຽວກໍ່ບໍ່ພໍໃຈ ຈຶ່ງໄດ້ສະເໜີຂໍຟື້ນຄະດີຄືນໃໝ່ ຍື່ນຕໍ່ອົງການໄອຍະການປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ບໍ່ຮັບເອົາຄຳຮ້ອງຟ້ອງມາພິຈາລະນາ ເຫັນດີ ໃຫ້ປະຕິບັດຕາມຄຳພິພາກສາຂອງສານຂັ້ນລົບລ້າງ. ຕໍ່ບັນຫາດັ່ງ ກ່າວ ພໍ່ຕູ້ແບງກໍ່ບໍ່ພໍໃຈ ຈຶ່ງໄດ້ຮ້ອງຂໍຄວາມເປັນທຳ ຕໍ່ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດ 14 ແຂວງສາລະວັນ

ກະນະປະສານງານປົກປ້ອງກົດໝາຍຂັ້ນແຂວງ ເຫັນດີໃຫ້ປະຕິບັດຕາມຄຳພິພາກສາຂອງສານຂັ້ນອຸທອນແຂວງສາລະວັນ. ສະຫຼຸບວ່າ ສິ່ງທີ່ດິນບ່ອນຂັດແຍ່ງ ບໍ່ຖືກແຍ່ງກັນ 4 ຄອບຄົວ ໄດ້ໄປຕາມຂະບວນການຍຸຕິທຳໝົດແລ້ວ ມີຄຳຕັດສິນຂອງສານທີ່ມີຜົນໃຊ້ໄດ້ຢ່າງເດັດຂາດ, ສ່ວນງານຈັດຕັ້ງປະຕິ ບັດຄຳຕັດສິນຂອງສານ ໄດ້ປະຕິບັດຕາມບາດກ້າວ ແລະ ຂັ້ນຕອນຂອງກົດໝາຍຄົບຖ້ວນແລ້ວ ຈຶ່ງບໍ່ສະເໜີບໍ່ຟື້ນ ມາດຕະການຕາມມາດຕາ 173 ຂອງກົດໝາຍອາຍາ, ສານປະຊາຊົນເຂດ 1 ແຂວງສາລະວັນ ໄດ້ຕັດສິນລົງໂທດຕັດອິດສະຫຼະພາບ ບໍ່ຖືກແຍ່ງ 3 ເດືອນ, ຜ່ານການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເຫັນວ່າ ຫ້ອງການຍຸຕິທຳເມືອງໄດ້ປະຕິບັດຢ່າງຖືກຕ້ອງຕາມ ກົດໝາຍ ແລະ ສິ້ນສຸດຂັ້ນຕອນຂະບວນການຍຸຕິທຳແລ້ວ ຕາມຄຳສັ່ງປິດສຳນວນຄະດີ ເລກທີ 1/ຂບກສ, ລົງວັນທີ 1/2/2017.

3. ປະຊາຊົນເມືອງກົງເຊໂດນ ໄດ້ສະທ້ອນແຍງໃຫ້ລັດຖະບານຮູ້ ກ່ຽວກັບ ການນຳຂອງເມືອງໄດ້ນຳເຂົ້າໝູຕິດພະຍາດມາຈຳໜ່າຍບຸນເມືອງກົງເຊໂດນ.

ວິທີແກ້ໄຂ: ພະແນກກະສິກຳ ແລະ ປ່າໄມ້ແຂວງ (ຂະແໜງລ້ຽງສັດ ແລະ ການປະມົງ) ລົງສົມທົບກັບ ອົງການປົກ ຄອງເມືອງກົງເຊໂດນ ໃນການເກັບກຳຂໍ້ມູນບັນຫາດັ່ງກ່າວ ຜ່ານການກວດກາຂອງເຈົ້າໜ້າທີ່ກ່ຽວຂ້ອງ ເຊິ່ງເຫັນວ່າ ປະຊາຊົນບ້ານດົ່ນກອກ ເມືອງກົງເຊໂດນ ໄດ້ໄປຊື້ຊີ້ນໝູບຸນປະຊຸມເມືອງກົງ ເພື່ອມາບໍລິໂພກ ແຕ່ຜູ້ກ່ຽວ ເຫັນວ່າ ຊີ້ນໝູເປັນຕຸ່ມ ນ້ອຍໆ ຈາກນັ້ນຜູ້ກ່ຽວໄດ້ຖ່າຍຮູບລົງສູ່ສື່ສັງຄົມອອນລາຍ (Facebook) ສ່ວນຕົວ ແລະ ນຳຊີ້ນໝູໄປຝັງໄວ້. ຈາກນັ້ນ, ທາງເຈົ້າໜ້າທີ່ ກໍ່ໄດ້ນຳເອົາຊີ້ນໝູມາພິສູດ ເຫັນວ່າບໍ່ເປັນອັນຕະລາຍ ຈຶ່ງໄດ້ນຳເອົາຊີ້ນດັ່ງກ່າວໄປທຳລາຍຖິ້ມ, ຈາກນັ້ນ, ກໍ່ ໄດ້ຕັກເຕືອນ ແລະ ສຶກສາອົບຮົມຜູ້ຂາຍຊີ້ນໝູ ແລະ ໄດ້ແຕ່ງຕັ້ງເຈົ້າໜ້າທີ່ກ່ຽວຂ້ອງລົງຕິດຕາມກວດກາຢ່າງເຂັ້ມງວດ ປັດຈຸບັນ ສະພາບດັ່ງກ່າວ ກັບ ຄືນສູ່ຄວາມສະຫງົບ ແລະ ປົກກະຕິ.

4. ປະຊາຊົນບ້ານທ່ານະລີ ເມືອງຕຸ້ມລານ ໄດ້ສະທ້ອນແຍງວ່າ ປະຊາຊົນໄດ້ຕັດໄມ້ຕື້ວໃນສວນປູກຂອງຕົນ ເພື່ອຂາຍເຂົ້າໂຮງງານ ແລະ ມີພະນັກງານປ່າໄມ້ ໄປລັດເອົາເງິນໃສ່ ຈຳນວນ 50.000 - 100.000 ກີບ/ລົດໜຶ່ງຄັນ.

ວິທີແກ້ໄຂ: ພະແນກກະສິກຳ ແລະ ປ່າໄມ້ແຂວງ ໄດ້ລົງສົມທົບກັບອົງການປົກຄອງເມືອງຕຸ້ມລານ ຜ່ານການເກັບກຳຂໍ້ ມູນຕົວຈິງ ເຫັນວ່າ ຕໍ່ບັນຫາດັ່ງກ່າວ ແມ່ນເປັນຂໍ້ມູນ ທີ່ກຸ່ມຄົນ ແລະ ບຸກຄົນບໍ່ດີ ຫາຄວາມບໍ່ຈິງໃສ່ເຈົ້າໜ້າທີ່, ປັດຈຸບັນ ໄດ້ ແກ້ໄຂໃຫ້ມີຄວາມສະຫງົບແລ້ວ.

5. ພະນັກງານຄູ ເມືອງວາປີ ແຂວງສາລະວັນ ໄດ້ສະທ້ອນແຍງຕໍ່ລັດຖະບານວ່າ ບໍ່ໄດ້ຮັບເງິນນ້ຳມັນຫຼາຍເດືອນແລ້ວ.

ວິທີແກ້ໄຂ: ພະແນກສຶກສາທິການ ແລະ ກິລາແຂວງ ໄດ້ຂຽນລາຍງານໄປຍັງກະຊວງສຶກສາ ກ່ຽວກັບ ການເບີກຈ່າຍ ເງິນນ້ຳມັນ ໃນງວດ 4 /2018 ທີ່ບໍ່ພຽງພໍຂອງຂະແໜງການສຶກສາໃນ 8 ເມືອງ, ກະຊວງສຶກສາທິການ ແລະ ກິລາ ໄດ້ແນະນຳວ່າ ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ ສະເໜີໄປຍັງກະຊວງສຶກສາທິການ ແລະ ກິລາ ພ້ອມດ້ວຍເອກະສານສັງ ລວມບັນຊີ ເງິນນ້ຳມັນຂອງພະນັກງານຄູ ໃນ 8 ເມືອງທີ່ຍັງບໍ່ພຽງພໍ ເພື່ອຂໍອະນຸມັດງົບປະມານເພີ່ມ, ມາຮອດເດືອນ 11/2018 ຈຶ່ງໄດ້ຮັບແຈ້ງຕອບວ່າ ຈະອະນຸມັດຕາມການສະເໜີ ໃນທ້າຍປີ 2018 ແຕ່ຕ້ອງລໍຖ້າຂະບວນການອະນຸມັດຈາກກະຊວງການ ເງິນ ເພາະວ່າໃນຊ່ວງເວລານັ້ນຢູ່ໃນຊ່ວງປິດສົກປີ, ມາຮອດວັນທີ 27/3/2019 ກົມການເງິນກະຊວງສຶກສາ ຈຶ່ງໄດ້ສົ່ງ ໃບຂໍຖອນມາໃຫ້, ພາຍຫຼັງ ໄດ້ຮັບໃບຂໍຖອນແລ້ວ ຈຶ່ງໄດ້ແຈ້ງໄປຍັງພະແນກການເງິນແຂວງ, ພ້ອມທັງປະສານໃຫ້ຫ້ອງການສຶກສາເມືອງ 8 ເມືອງ ຮີບຮ້ອນ ປະກອບເອກະສານ ມາຮັບເອົາເງິນນ້ຳມັນ ງວດ 4/2018 ທີ່ຍັງບໍ່ພຽງພໍ, ກ່ອນປີໃໝ່ລາວ ປີ 2019 ໄດ້ມີຫ້ອງການສຶກສາເມືອງ 3 ເມືອງມາຮັບເງິນກ່ອນ( ກົງເຊໂດນ, ຕຸ້ມລານ ແລະ ເລົ່າງາມ), ສ່ວນອີກ 4 ເມືອງແມ່ນມາຮັບຫຼັງປີໃໝ່ລາວ 2019, ສຳລັບ ເມືອງວາປີ ໃນໄລຍະທີ່ພະແນກສຶກສາແຈ້ງໄປ ຫ້ອງການສຶກສາເມືອງໄດ້ຕອບມາວ່າ ໃນໄລຍະນີ້ ໄດ້ຖືກແຕ່ງຕັ້ງເປັນໃຈກາງງານບຸນ ຊ່ວງເຮືອທີ່ປາກເຊດແກ້ງໆ ແລະ ຕໍ່ດ້ວຍວັນສັກປີໃໝ່ລາວ, ສະນັ້ນ, ຈຶ່ງບໍ່ຢາກຮັກສາເງິນເປັນຈຳນວນຫຼາຍໄວ້ ເຊິ່ງສ່ຽງຕໍ່ຄວາມປອດໄພ, ຮອດວັນທີ 24/4/2019 ແມ່ນໄດ້ເບີກຈ່າຍເງິນນ້ຳມັນງວດ 4/2018 ໄດ້ສຳເລັດໝົດ 8 ເມືອງ ແລະ ປັດຈຸບັນນີ້ ສະພາບ ດັ່ງກ່າວກໍ່ມີຄວາມສະຫງົບດີ.

6. ປະຊາຊົນແຂວງສາລະວັນໄດ້ສະທ້ອນແຍງເຖິງລັດຖະບານຮູ້ວ່າ ໂຮງງານຜະລິດເມັດປຸ໋ຍປາສຕິກຂອງບໍລິສັດອາຊຽນ

ສປຈີນ ທີ່ຕັ້ງຢູ່ບ້ານສົມສະອາດ ເມືອງຄົງເຊໂດນ ແຂວງສາລະວັນ ໄດ້ເອົາເສດຂີ້ເຫຍື້ອໄປຖິ້ມຢູ່ໄຮ່ນາຂອງປະຊາຊົນ ແລະ ທາງ ເຮັດໃຫ້ປະຊາຊົນໄດ້ຮັບຜົນກະທົບ.

ວິທີແກ້ໄຂ: ອົງການປົກຄອງແຂວງ ໄດ້ມອບໃຫ້ພະແນກຊັບພະຍາກອນ ແລະ ສິ່ງແວດລ້ອມແຂວງ, ພະແນກແຜນ ການ , ພະແນກອຸດສາຫະກຳ ແລະ ການຄ້າ ລົງສົມທົບກັບ ອົງການປົກຄອງເມືອງຄົງເຊໂດນ ແລະ ບໍລິສັດອາຊຽນ ຕໍ່ບັນຫາດັ່ງກ່າວ ເຫັນວ່າ ບໍລິສັດໄດ້ດຳເນີນຢ່າງຖືກຕ້ອງຕາມລະບຽບຂັ້ນຕອນຂອງກົດໝາຍການລົງທຶນ ທຸກຢ່າງ, ແຕ່ບັນຫາດັ່ງກ່າວ ນີ້ ເຫັນວ່າ ເສດຂີ້ເຫຍື້ອທີ່ບໍລິສັດເອົາມາຖິ້ມໃສ່ທາງ ແມ່ນເສດດິນຈາກການປຸກສ້າງ ແລະ ອະນາໄມສະຖານທີ່ ມາຖິ້ມທາງທີ່ເຫັນວ່າມັນຊຸບ ແລ້ວມີການກອດໃຫ້ຮາບພຽງດີ ເຮັດໃຫ້ລົດແລ່ນສະດວກ. ຕໍ່ບັນຫາດັ່ງກ່າວ ໄດ້ແກ້ໄຂໃຫ້ມີຄວາມສະ ຫງົບປົກກະຕິແລ້ວ.

7. ພະນັກງານບ້ານສາມັກຄີໄຊ ເມືອງຕຸ້ມລານ ແຂວງສາລະວັນ ໄດ້ສະເໜີໃຫ້ເພີ່ມເງິນເດືອນໃຫ້ນາຍບ້ານສາມັກຄີ ໄຊ ເຊິ່ງເປັນນາຍບ້ານ ນັບແຕ່ປີ 1994 ຈົນຮອດປັດຈຸບັນ ແຕ່ໄດ້ເງິນເດືອນ 100.000 ກີບຕໍ່ເດືອນ.

ຕໍ່ກັບບັນຫານີ້ ຍັງສືບຕໍ່ເກັບກຳຂໍ້ມູນ ພາຍຫຼັງສຳເລັດແລ້ວ ຈະໄດ້ສົ່ງຕາມຫຼັງ

ດັ່ງນັ້ນ, ຈິ່ງຮຽນລາຍງານມາຍັງທ່ານ ເພື່ອຊາບ.

ຫົວໜ້າຫ້ອງວ່າການແຂວງສາລະວັນ

ຫ້ອງວ່າການ ປົກຄອງ

ປອ ສະໄໝ ໂພທິສານ

Dr Samay PHOTHISANH